ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ສັນຕິພາບເອກະລາດປະຊາທິປະໄຕເອກະພາບວັດທະນະຖາວອນ

ທະນາຄານແຫ່ງ ສປປລາວ

ເລກທີ: 07 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 30 ກໍລະກົດ 2018

ສຳນັກງານ ຄຄຊ
ເລກທີ ...0793...
ວັນທີ 01 AUG 2018
ໂທລະສັບ 021 217770

## ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ ມິຖຸນາ ປີ 2018 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I
## ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງທະນາຄານໃນໄລຍະຜ່ານມາ

### I.ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນໜຸ້ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນ ມິຖຸນາ 2018 ແລະ ທິດທາງແຜນການໃນເດືອນ ກໍລະກົດ 2018 ດັ່ງລາຍລະອຽດລຸ່ມນີ້:

### II.ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ.

- ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆ: ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ VIII; ກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ມິຖຸນາ 2018; ກອງປະຊຸມປຶກສາຫາມາດຕະການກະຕຸ້ນເສດຖະກິດມະຫາພາກ; ກອງປະຊຸມຄະນະກຳມະການເປີດເສລີການບໍລິການທາງການເງິນອາຊຽນ ຄັ້ງທີ 59 ທີ່ປະເທດໄທ; ກອງປະຊຸມເຈົ້າໜ້າທີ່ອາວຸໂສ; ກອງປະຊຸມສຸດຍອດຍຸດທະສາດການຮ່ວມມືເສດຖະກິດຮອບດ້ານໃນຂົງເຂດແມ່ນ້ຳອີຣາວະດີ, ແມ່ນ້ຳເຈົ້າພະຍາ ແລະ ແມ່ນ້ຳຂອງ ຄັ້ງທີ 8 ທີ່ປະເທດໄທ ແລະ ກອງປະຊຸມຄັ້ງປະຖົມມະເລີກຂອງຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ;
- ສຳເລັດການຈັດກອງປະຊຸມຕ່າງໆ: ກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບຄັ້ງທີ I ປະຈຳປີ 2018; ກອງປະຊຸມຄະນະຊີ້ນຳລວມຊຸກຍູ້ພັນທະບັດລັດຖະບານ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ; ກອງປະຊຸມເວທີປຶກສາຫາລືຮ່ວມກັບສະຖານທູດ ສ. ອາເມລິກາ ປະຈຳ ສປປ ລາວ ໃນຫວຂໍ້: "Lao digital Forum II"; ກອງປະຊຸມປຶກສາຫາກ່ຽວກັບການເບີກຈ່າຍເງິນເດືອນ ແລະ ວຽກງານຫັນເປັນທັນສະໄໝໃນການເກັບລາຍຮັບ; ກອງປະຊຸມໜ່ວຍງານຄົ້ນຄວ້າປັບປຸງນິຕິກຳທີ່ຮັບໃຊ້ການເຄື່ອນໄຫວວຽກງານວິຊາສະເພາະຂອງຂະແໜງການທະນາຄານ; ກອງປະຊຸມຜ່ານແຜນແມ່ບົດສະຖາບັນການທະນາຄານ; ກອງປະຊຸມປ້ອງກັນຮ່າງກົດໝາຍວ່າດ້ວຍ ທຫລ ຕໍ່ກອງປະຊຸມສະພາແຫ່ງຊາດ; ກອງປະຊຸມສະພາບໍລິຫານທະນາຄານ ສົ່ງເສີມກະສິກຳ ແລະ ກອງປະຊຸມປຶກສາຫາລືບາງວຽກງານເລັ່ງດ່ວນກ່ຽວກັບທະນາຄານ;

– ຈັດຕັ້ງ ແລະ ເຂົ້າຮ່ວມພິທີຕ່າງໆ: ຈັດຝຶກອົບຮົມໃນຫົວຂໍ້: "ວຽກງານການລາຍງານຖານະການເງິນ" ແລະ "ວິທີການຕິດຕັ້ງ, ການນໍາໃຊ້ ແລະ ການໂອນຜັງບັນຊີ ເຂົ້າໃນໂປຼແກຼມບັນຊີສະຖາບັນການເງິນ"; ຈັດຕັ້ງປະຕິບັດມອບ-ຮັບເອກະສານແຈ້ງຊັບສິນ ແລະ ລາຍຮັບທີ່ຄົບຮອບວຽນທີ 2 ຂອງປີ 2016; ເຂົ້າຮ່ວມພິທີຍ່າງ ເພື່ອສຸຂະພາບ ເນື່ອງໃນໂອກາດສະເຫຼີມສະຫຼອງ ວັນຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງສາກົນ;

– ສໍາເລັດການຕ້ອນຮັບແຂກເຂົ້າພົບປະຄະນະນໍາ ທຫລ ຂອງຄະນະກອງທຶນສາຍໄໝ ສປ ຈີນ; ຄະນະທະນາຄານພັດທະນາແຫ່ງຊາດຈີນ CDB; ຄະນະອົງການການເງິນສາກົນ IFC; ຜູ້ບໍລິຫານອົງການການເງິນສາກົນ ປະຈໍາຂົງເຂດອາຊີຕາເວັນອອກ ແລະ ປາຊີຟິກ; ຄະນະປະທານສະພາບໍລິຫານທະນາຄານ ການຄ້າຕ່າງປະເທດຫວຽດນາມ ປະຈໍາລາວ ຈໍາກັດ (Vietcom Laos); ກຸ່ມບໍລິສັດຈິງເຫົ່ ຈາກປະເທດ ສປ. ຈີນ; ຄະນະຊ່ຽວຊານໂຄງການ ຮ່ວມມືແລກປ່ຽນຄວາມຮູ້ທາງດ້ານວິຊາການຂອງທະນາຄານ ສ. ເກົາຫຼີ;

## III.ສະພາບພົ້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊໍາລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. ສະພາບເສດຖະກິດເງິນຕາສາກົນ.

– ໃນເດືອນ 06/2018 ສະພາບເສດຖະກິດໂລກໂດຍລວມສືບຕໍ່ຂະຫຍາຍຕົວຕໍ່ເນື່ອງ ໂດຍໄດ້ແຮງຊຸກຍູ້ຈາກການລົງທຶນທີ່ເຂັ້ມແຂງໃນຂົງເຂດເສດຖະກິດທີ່ພັດທະນາແລ້ວ. ພິເສດສະພາບພົ້ນເດັ່ນໃນເດືອນນີ້ ແມ່ນຜົນຂອງກອງປະຊຸມ G7 ແລະ ບັນຍາກາດສັນຕິພາບໃນຂົງເຂດອາຊີຕາເວັນອອກ ພາຍຫຼັງການລົງນາມຮ່ວມລະຫວ່າງຜູ້ນໍາ ສປປ. ເກົາຫຼີ ແລະ ສ.ອາເມລິກາ ໄດ້ສົ່ງຜົນເຮັດໃຫ້ສະພາບລາຄາຫຸ້ນຂອງ ສ.ອາເມລິກາ ປັບຕົວເພີ່ມຂຶ້ນ. ພ້ອມທັງສະກຸນເງິນໂດລາມີທ່າອ່ຽງແຂງຄ່າຂຶ້ນ ເມື່ອທຽບໃສ່ຫຼາຍສະກຸນເງິນຫຼັກໃນຕະຫຼາດສາກົນ. ແຕ່ເຖິງຢ່າງໃດກໍ່ຕາມ, ການປັບເພີ່ມອັດຕາອາກອນຂອງປະເທດຍີ່ປຸ່ນ ແລະ ບາງປະເທດທີ່ພັດທະນາແລ້ວ ອາດສົ່ງຜົນຕໍ່ອັດຕາເງິນເຟີ້ມີທ່າອ່ຽງເພີ່ມຂຶ້ນ.

– ສໍາລັບອັດຕາແລກປ່ຽນ: ເງິນໂດລາແຂງຄ່າຂຶ້ນ 2,69% ທຽບໃສ່ເງິນເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສ.ອາເມລິກາອອກມາດີ ເປັນຕົ້ນແມ່ນໃນເດືອນ 05/2018 ຕົວເລກດັດຊະນີພາກອຸດສາຫະກໍາການຜະລິດປັບຕົວເພີ່ມຂຶ້ນຢູ່ທີ່ລະດັບ 58,7 ຈຸດ ຈາກລະດັບ 57,3 ຈຸດ ໃນເດືອນຜ່ານມາ ແລະ ຕົວເລກອັດຕາການວ່າງງານປັບຕົວຫຼຸດລົງ ຢູ່ທີ່ລະດັບ 3,8% ຈາກລະດັບ 3,9% ໃນເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກດັດຊະນີຜູ້ຈັດການຝ່າຍຈັດຊື້ຂອງຂະແໜງການບໍລິການເບື້ອງຕົ້ນກໍ່ໄດ້ປັບຕົວເພີ່ມຂຶ້ນ ຢູ່ທີ່ລະດັບ 55,7 ຈຸດ ຈາກລະດັບ 54,6 ຈຸດໃນເດືອນຜ່ານມາ.

– ໃນດ້ານລາຄານໍ້າມັນຫຼຸດລົງ 1,26% ຈາກ 68,57 ໂດລາ/ບາເຣວ ມາເປັນ 67,71 ໂດລາ/ບາເຣວ ເນື່ອງຈາກຄັງສໍາຮອງນໍ້າມັນດິບຂອງ ສ.ອາເມລິກາ ເພີ່ມຂຶ້ນ. ພ້ອມກັນນັ້ນ, ສ.ອາເມລິກາ ໄດ້ສືບຕໍ່ເພີ່ມກໍາລັງການຜະລິດນໍ້າມັນດິບໂດຍການເພີ່ມແຫ່ງຂຸດເຈາະນໍ້າມັນດິບຂຶ້ນມາເປັນ 861 ແຫ່ງ ຊຶ່ງເປັນຕົວເລກສູງສຸດໃນຮອບ 3 ປີ ແລະ ໃນວັນທີ 1 ມິຖຸນາ 2018 ປະລິມານການຜະລິດນໍ້າມັນດິບໄດ້ເພີ່ມຂຶ້ນສູ່ລະດັບ 10,8 ລ້ານບາເຣວ/ວັນ ຫຼື ເພີ່ມຂຶ້ນປະມານ 28% ໃນຊ່ວງໄລຍະເວລາ 2 ປີຜ່ານມາ. ສ່ວນດ້ານລາຄາຄໍາຫຼຸດລົງ 1,72% ຈາກ 1.320,44 ໂດລາ/ອອນ ມາເປັນ 1.297,68 ໂດລາ/ອອນ ເນື່ອງຈາກການແຂງຄ່າຂຶ້ນຂອງເງິນໂດລາ ເຮັດໃຫ້ນັກລົງທຶນເທຂາຍຄໍາ ແລະ ສັນຍາຊື້-ຂາຍຄໍາເພື່ອເອົາກໍາໄລ.

2. ສະພາບເງິນຕາພາຍໃນ.

– ອັດຕາເງິນເຟີ້ປະຈຳເດືອນ 06/2018 (ຕົວເລກຄາດຄະເນ) ຢູ່ໃນລະດັບ 2,35% ເພີ່ມຂຶ້ນຈາກ 1,97% ໃນເດືອນ 05/2018. ສາເຫດຕົ້ນຕໍຍ້ອນການປັບຕົວເພີ່ມຂຶ້ນຂອງລາຄາໝວດຄົມມະນາຄົມ ແລະ ການຂົນສົ່ງ (ໃນນັ້ນ, ລາຄານ້ຳມັນເຊື້ອໄຟໃນຂອບເຂດທົ່ວປະເທດມີການປັບເພີ່ມຂຶ້ນ 1 ຄັ້ງ ໃນເດືອນ ມິຖຸນາ 2018).

– ຖານເງິນຕາປະຈຳເດືອນ 06/2018 ເພີ່ມຂຶ້ນ 361,33 ຕື້ກີບ ຫຼື 0,89% ທຽບໃສ່ເດືອນ 05/2018, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 3.610,68 ຕື້ກີບ ຫຼື 9,71%. ປະລິມານເງິນ M2 ເພີ່ມຂຶ້ນ 145,31 ຕື້ກີບ ຫຼື 0,18% ທຽບໃສ່ເດືອນ 05/2018 ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 6.354,33 ຕື້ກີບ ຫຼື 8,36%;

– ອັດຕາແລກປ່ຽນທົ່ວລະບົບໃນເດືອນ 06/2018 ທຽບເດືອນ 05/2018 ໝັ້ນຄົງໃນຂອບທີ່ກຳນົດໄວ້ ຊຶ່ງເຫັນໄດ້ຈາກເງິນກີບອ່ອນຄ່າລົງເມື່ອທຽບໃສ່ເງິນໂດລາ 0,70% ແຕ່ແຂງຄ່າຂຶ້ນ 0,52% ທຽບໃສ່ເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງເມື່ອທຽບກັບເງິນໂດລາ 1,14% ແລະ ອ່ອນຄ່າລົງ 3,04% ທຽບກັບເງິນບາດ.

– ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 06/2018 (14/05/2018-12/06/2018) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດເພີ່ມຂຶ້ນ 5,32% ຖ້າທຽບໃສ່ເດືອນ 05/2018. ທທກ ຂາຍເງິນຕາຕ່າງປະເທດສຸດທິ 55,41 ລ້ານໂດລາທຽບເທົ່າ (ໃນນັ້ນ, ຊື້ເງິນໂດລາສຸດທິ 2,81 ລ້ານໂດລາ ແຕ່ຂາຍເງິນບາດສຸດທິ 1.814,92 ລ້ານບາດ ຫຼື 58,22 ລ້ານໂດລາທຽບເທົ່າ). ນອກນັ້ນ, ເພື່ອດຸ່ນດ່ຽງຕະຫຼາດເງິນຕາຕ່າງປະເທດ ທຫລ ໄດ້ຂາຍເງິນຕາຕ່າງປະເທດໃຫ້ ທທກ ສຸດທິ 9,57 ລ້ານໂດລາ. ປະລິມານການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນ ຈຳນວນ 28,17 ລ້ານໂດລາທຽບເທົ່າ (ໃນນີ້ປະລິມານຊື້-ຂາຍເງິນໂດລາ 18,35 ລ້ານໂດລາ ແລະ ເງິນບາດ 306,22 ລ້ານບາດ ຫຼື 9,82 ລ້ານໂດລາທຽບເທົ່າ);

– ສະພາບການໄຫຼຂອງກະແສເງິນຜ່ານລະບົບທະນາຄານ ປະຈຳເດືອນ 06/2018 (13/05/2018-12/06/2018) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 198,07 ລ້ານໂດລາ ໃນນັ້ນ, ກະແສເງິນໄຫຼເຂົ້າ ຈຳນວນ 452,05 ລ້ານໂດລາ ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າ ຈຳນວນ 203,35 ລ້ານໂດລາ, ຮັບຈາກການບໍລິການ ຈຳນວນ 139,88 ລ້ານໂດລາ, ຮັບເງິນຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 31,62 ລ້ານໂດລາ ແລະ ຮັບເງິນກູ້ຢືມຂອງຫົວໜ່ວຍທຸລະກິດ ຈຳນວນ 30 ລ້ານໂດລາ. ສ່ວນກະແສເງິນໄຫຼອອກຜ່ານລະບົບທະນາຄານ ຈຳນວນ 650,12 ລ້ານໂດລາ ຕົ້ນຕໍແມ່ນຊຳລະຄ່ານຳເຂົ້າສິນຄ້າຂອງບັນດາວິສາຫະກິດ ຈຳນວນ 462,80 ລ້ານໂດລາ, ຊຳລະຄ່າບໍລິການ ຈຳນວນ 76,34 ລ້ານໂດລາ ແລະ ຊຳລະເງິນກູ້ພາກລັດຖະບານ ຈຳນວນ 32,40 ລ້ານໂດລາ.

3. ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ

– ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 12/06/2018 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 71.404,46 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 0,54% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7,89%. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 0,53% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 46,22% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ເພີ່ມຂຶ້ນ 0,56% ຊຶ່ງກວມເອົາ 53,78% ຂອງເງິນຝາກທັງໝົດ;

– ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 12/06/2018 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 67.188,17 ຕື້ກີບ ເພີ່ມຂຶ້ນ 0,84% ເມື່ອທຽບໃສ່ເດືອນຜ່ານມາ. ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7,37%. ສິນເຊື່ອເປັນເງິນກີບກວມເອົາ 47,94% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດກວມເອົາ 52,06% ຂອງສິນເຊື່ອທັງໝົດ;

- ທະນາຄານນະໂຍບາຍປ່ອຍສິນເຊື່ອທັງໝົດ 14,07 ຕື້ກີບ ທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 1,6%, ເກັບຄືນທຶນໄດ້ 21,95 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 7,79% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກໍາ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 06/2018 ມີຈໍານວນ 3.111 ຕື້ກີບ ເທົ່າກັບ 99,04% ຂອງແຜນການ (3.140,93 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 2.068,63 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 324,51 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 288,17 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 429,67 ຕື້ກີບ.

## 4. ການເຄື່ອນໄຫວຊໍາລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊໍາລະສະສາງ

ການຊໍາລະສະສາງດ້ວຍແຊັກຜ່ານສູນຊໍາລະສະສາງໃນເດືອນນີ້ມີ ຈໍານວນ 3.602 ສະບັບ ເພີ່ມຂຶ້ນ 9,08% ເປັນເງິນ ຈໍານວນ 1.611,71 ຕື້ກີບ ເພີ່ມຂຶ້ນ 22,04% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີ ຈໍານວນ 176 ຄັ້ງ ເພີ່ມຂຶ້ນ 10,69% ເມື່ອທຽບໃສ່ເດືອນຜ່ານມາ, ມີມູນຄ່າການໂອນ 849,72 ຕື້ກີບ ເພີ່ມຂຶ້ນ 24,78% ເມື່ອທຽບໃສ່ເດືອນຜ່ານມາ; ສໍາລັບການໂອນເງິນຜ່ານລະບົບຊໍາລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/05-24/06/2018 ມີຈໍານວນ 16.397 ຄັ້ງ ລາຍລະອຽດມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈໍານວນ 16.048 ຄັ້ງ ມີມູນຄ່າການໂອນ 3.858,84 ຕື້ກີບ ຫຼຸດລົງ 20,27% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວມະຫາຊົນເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 4.841 ຄັ້ງ. ໃນນັ້ນມີ 42 ພາກສ່ວນທີ່ເຮັດທຸລະກໍາ (ທະນາຄານທຸລະກິດ 38 ແຫ່ງ, ຕະຫຼາດຫຼັກຊັບ, LAPS, BCONEX ແລະ ກະຊວງການເງິນ);
- **ກະຊວງການເງິນ:** ມີການເຄື່ອນໄຫວຈໍານວນ 349 ຄັ້ງ ມີມູນຄ່າການໂອນ 256,03 ຕື້ກີບ ຫຼຸດລົງ 56,7% ທຽບໃສ່ເດືອນຜ່ານມາ.

### 4.2ການຊື້-ຂາຍພັນທະບັດ

- ໃນເດືອນ 06/2018 ພັນທະບັດກະຊວງການເງິນໄດ້ມີການຈໍາໜ່າຍພັນທະບັດບ້ວງລະດົມທຶນຜ່ານ ທຫລ ຈໍານວນ 418 ຕື້ກີບ. ໃນນັ້ນ, ຈໍາໜ່າຍໃຫ້ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈໍານວນ 300 ຕື້ກີບ, ທະນາທະນາຄານອຸດສາຫະກໍາ ແລະ ການຄ້າ ສປ.ຈີນ ຈໍານວນ 50 ຕື້ກີບ, ກອງທຶນປົກປ້ອງຜູ້ຝາກເງິນ ຈໍານວນ 5 ຕື້ກີບ, ຫ້ອງການຫວຍພັດທະນາ ຈໍານວນ 50 ຕື້ກີບ, ທະນາຄານຮ່ວມພັດທະນາ ຈໍານວນ 13 ຕື້ກີບ ແລະ ໄຖ່ຖອນພັນທະບັດຈໍານວນ 637 ຕື້ກີບ. ໃນນັ້ນ, ທະນາຄານການຄ້າຕ່າງປະເທດ ຈໍານວນ 558 ຕື້ກີບ, ທະນາຄານພົງສະຫວັນ ຈໍານວນ 6 ຕື້ກີບ, ກອງທຶນປົກປ້ອງຜູ້ຝາກເງິນ ຈໍານວນ 10 ຕື້ກີບ, ຫ້ອງການຫວຍພັດທະນາ ຈໍານວນ 50 ຕື້ກີບ, ທະນາຄານຮ່ວມພັດທະນາ ຈໍານວນ 13 ຕື້ກີບ;
- ພັນທະບັດຂອງກະຊວງການເງິນມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.668,20 ຕື້ກີບ ແລະ 65 ລ້ານໂດລາສະຫະລັດ (ບ້ວງລະດົມທຶນ ທທກ ໂດຍກົງ 24 ຕື້ກີບ ແລະ 65 ລ້ານໂດລາສາຫະລັດ, ພັນທະບັດບ້ວງລ້າງໜີ້ 2.663 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທຫລ 2.981,20 ຕື້ກີບ);
- ສໍາລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 06/2018 ບໍ່ມີການຈໍາໜ່າຍ, ປັດຈຸບັນຍັງມີຍອດເຫຼືອພັນທະບັດບໍ່ທັນໄຖ່ຖອນທັງໝົດ 404 ລ້ານໂດລາສະຫະລັດ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 908,70 ຈຸດ ຫຼຸດລົງ 2,13% ເມື່ອທຽບໃສ່ເດືອນຜ່ານມາ ແລະ ຫຼຸດລົງ 9,42% ເມື່ອທຽບໃສ່ດັດຊະນີທ້າຍປີຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 2.493.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 11,82 ຕື້ກວ່າກີບ ເພີ່ມຂຶ້ນ 23,38% ທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດ

ຊື້-ຂາຍສະເລ່ຍກວມເອົາ 62,29% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນຍ້ອນການປັບຕົວຫຼຸດລົງຂອງລາຄາຮຸ້ນ EDL-Gen, PCD ແລະ PTL ຊຶ່ງເປັນຜົນມາຈາກການຂາຍຮຸ້ນຂອງຜູ້ລົງທຶນກວມເອົາ 54,68% ຂອງມູນຄ່າການຊື້-ຂາຍທັງໝົດໃນເດືອນນີ້.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວມະຫາຊົນ (BCEL) ມີລາຄາຊື້-ຂາຍປິດຕົວຢູ່ລະດັບເກົ່າຄື: 5.400 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.112.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,92 ຕື້ກວ່າກີບ ຫຼຸດລົງ 25,52% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວມະຫາຊົນ (EDL-Gen) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 4.350 ກີບ/ຮຸ້ນ ຫຼຸດລົງ 150 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.312.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,76 ຕື້ກວ່າກີບ ເພີ່ມຂຶ້ນ 258,74% ເມື່ອທຽບໃສ່ເດືອນຜ່ານມາ. ສາເຫດຍ້ອນບໍລິສັດໄດ້ຮັບລາງວັນ Green Leadership ໃນງານ Asia Responsible Enterprise Award (AREA) 2018;

– ຮຸ້ນຂອງບໍລິສັດລາວເວີນມະຫາຊົນ (LWPC) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 8.650 ກີບ/ຮຸ້ນ ເພີ່ມຂຶ້ນ 4.050 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ ແລະ ມີປະລິມານຊື້-ຂາຍທັງໝົດ 3.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 25,64 ລ້ານກວ່າກີບ ເພີ່ມຂຶ້ນ 100% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດປີໂຕຣລ້ຽມເທຣດດິ້ງລາວມະຫາຊົນ (PTL) ມີລາຄາຊື້-ຂາຍປິດຕົວຢູ່ທີ່ລະດັບ 1.600 ກີບ/ຮຸ້ນ ຫຼຸດລົງ 100 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 7.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 11,68 ລ້ານກວ່າກີບ ເພີ່ມຂຶ້ນ 765,19% ທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ (SVN) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ ເກົ່າຄື: 2.850 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ ແລະ ມີປະລິມານຊື້-ຂາຍທັງໝົດ 2.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,98 ລ້ານກວ່າກີບ ເພີ່ມຂຶ້ນ 100% ທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດພູສີກໍ່ສ້າງມະຫາຊົນ (PCD) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 1.300 ກີບ/ຮຸ້ນ ຫຼຸດລົງ 100 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 15.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 20,97 ລ້ານກີບ ເພີ່ມຂຶ້ນ 306,40% ເມື່ອທຽບໃສ່ເດືອນຜ່ານມາ;

– ຮຸ້ນຂອງບໍລິສັດຊີມັງລາວ (LCC) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 2.250 ກີບ/ຮຸ້ນ ເພີ່ມຂຶ້ນ 150 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 40.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 80,57 ລ້ານກີບ ເພີ່ມຂຶ້ນ 255,48% ເມື່ອທຽບໃສ່ເດືອນຜ່ານມາ.

## 6. ວຽກງານອື່ນໆ

– ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນເຂົ້າ ສປປ ລາວ ຈຳນວນ 252,06 ລ້ານໂດລາທຽບເທົ່າ, ເພີ່ມຂຶ້ນ 47% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາ ຈຳນວນ 233,80 ລ້ານໂດລາ ກວມເອົາ 93% ຂອງເງິນທັງໝົດ, ເງິນບາດ 556 ລ້ານບາດ. ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 245,13 ລ້ານໂດລາທຽບເທົ່າ ຫຼຸດລົງ 26% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາ ຈຳນວນ 179,58 ລ້ານໂດລາ ກວມເອົາ 73% ຂອງເງິນທັງໝົດ, ເງິນບາດ 1,92 ຕື້ບາດ, 23.695 ເອີໂຣ, 8.860 ຝຣັ່ງສະວິດ, 4.125 ປອນສະເຕີລິງ, 15,47 ລ້ານເຢັນ, 117.610 ໂດລາການາດາ, 95.805 ໂດລາອົດສະຕາລີ, 10.749 ໂດລາສິງກະໂປ ແລະ 3.000 ໂດລານິວຊີແລນ;

– ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສຳເລັດການອອກແຈ້ງການຫາທະນາຄານທຸລະກິດທົ່ວລະບົບ ກ່ຽວກັບການໃຫ້ບໍລິການຜະລິດຕະພັນຂອງທະນາຄານໃຫ້ແກ່ລູກຄ້າ ທີ່ຕິດພັນກັບການຮ້ອງທຸກຜ່ານສາຍດ່ວນ 1510; ສຳເລັດການລົງກວດກາປະຈຳປີ 2017 ຫາໄຕມາດ 01 ປີ 2018 ຈຳນວນ 03 ທະນາຄານ; ສຳເລັດການອອກໃບອະນຸຍາດດຳເນີນທຸລະກິດຖາວອນໃຫ້ແກ່ ສກຈບ ອຸດົມຊັບ; ສຳເລັດການລົງກວດກາສຸກເສີນໂຮງຊວດຈຳນຸມ

ຟີ ແລະ ໂຮງຊວດຈຳ ຈົ່ງເຊີນ; ສຳເລັດການລົງກວດກາ ປະຈຳປີ 2017-2018 ສະຖາບັນການເງິນຈຸນລະພາກທີ່ຮັບເງິນຝາກ ເອກພັດທະນາ ແລະ ໂຊກໄຊ.

– ສຳເລັດການຮັບຮອງນິຕິກຳຕ່າງໆຄື: ຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮ່ໜີ້ ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ (ສະບັບປັບປຸງ).

## ພາກທີ II

## ວຽກງານຈຸດສຸມໃນເດືອນຕໍ່ໄປ

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້, ຄວບຄຸມປັດໄຈຕ່າງໆທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດ, ເກັບກຳສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບ, ຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ຫັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ກຳນົດອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍການຮັກສາຄວາມໝັ້ນຄົງຂອງສະຖາບັນການເງິນ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງລະບົບໂປແກມລະບົບບໍລິ ຫານຂໍ້ມູນທາງການເງິນຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ (MIS); ຂໍ້ຕົກລົງວ່າດ້ວຍການຫຼຸດອັດຕາສ່ວນໃນການວາງເງິນມັດຈຳເພື່ອຊື້ຫຼັກຊັບ; ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ ແລະ ຂໍ້ຕົກລົງວ່າດ້ວຍທະນາຄານດູແລຊັບສິນ; ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດບັນຊີສຳລັບ ທະນາຄານແຫ່ງ ສປປ ລາວ ໃຫ້ສອດຄ່ອງກັບຮ່າງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ແລະ ທະນາຄານທຸລະກິດ ໃຫ້ສອດຄ່ອງກັບຮ່າງກົດໝາຍທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍນະໂຍບາຍຕໍ່ນັກສຶກສາ; ລະບຽບວ່າດ້ວຍການກຳນົດຄ່າເຊົ່າຊັບສິນບັດຂອງ ສທຄ ແລະ ລະບຽບຄຸ້ມຄອງຫໍພັກນັກສຶກສາ;

– ສືບຕໍ່ກະກຽມຮອບດ້ານສຳລັບການສະເຫຼີມສະຫຼອງວັນສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ ຄົບຮອບ 50 ປີ;

– ສືບຕໍ່ກະກຽມເອກະສານສຳລັບການເຜີຍແຜ່ເຊື່ອມຊຶມມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 6 ສະໄໝທີ X;

– ສືບຕໍ່ກະກຽມເນື້ອໃນເຂົ້າຮ່ວມກອງປະຊຸມຂັ້ນສູງສອງຝ່າຍລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະທະນາຄານແຫ່ງລັດຫວຽດນາມ;

– ສືບຕໍ່ກະກຽມຈັດ ແລະ ເຂົ້າຮ່ວມກອງປະຊຸມຕ່າງໆ ຄື: ❶ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງບັນດາຮາກຖານພັກ ເພື່ອກຳນົດທິດທາງ, ແຜນການ 2 ປີ ຕໍ່ໜ້າ; ❷ກອງປະຊຸມປຶກສາຫາລືເພື່ອປັບປຸງຮ່າງຂໍ້ຕົກລົງວ່າດ້ວຍມາດຕະຖານການເຂົ້າເຖິງການບໍລິການທາງດ້ານການເງິນ; ❸ກອງປະຊຸມປຶກສາຫາລື

ກ່ຽວກັບທິດທາງໃນການສະໜອງສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ປັບປຸງກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ; ❹ກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ແລະ ນິຕິກຳກ່ຽວຂ້ອງ ແລະ ❺ກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ;

- ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ສອນໄຊ ສິດພະໄຊ

ສົ່ງ:
- ຄະນະຜູ້ວ່າການທຫລ.
- ຜູ້ຊ່ວຍຄະນະຜູ້ວ່າການ ທຫລ.
- ຫ້ອງວ່າການສູນກາງພັກ.
- ກົມຄົ້ນຄວ້າສັງລວມ, ສຳນັກງານປະທານປະເທດ.
- ກົມຄົ້ນຄວ້າ-ສັງລວມ, ຫສນຍ.
- ຫ້ອງການກະຊວງແຜນການ ແລະການລົງທຶນ.
- ຫ້ອງການກະຊວງການເງິນ.
- ຄະນະກຳມະທິການແຜນການການເງິນແລະການກວດສອບສະພາແຫ່ງຊາດ.
- ບັນດາກົມ ແລະທຽບເທົ່າກົມພາຍໃນທຫລ.
- ຄະນະຫ້ອງການທຫລ.
- ສຳເນົາ.